# ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ (4)

ຕໍ່ຈາກສະບັບທີ 19 ພວກເຮົາແນ່ໃສ່ຫ້ອງການ ກະສິກໍາ ແລະ ປ່າໄມ້ເມືອງ (ກປມ) ທີ່ກໍາລັງເນັ້ນເລື່ອງ ການໃຫ້ຄໍາແນະນໍາດ້ານເຕັກນິກເປັນແນວທາງໃຫ້ກັບຊາວນາໃນເມືອງເປົ້າໝາຍ. ໃນເດືອນຕຸລາ 2021ນີ້, ໂຄງການສະຫວັນເພດໄດ້ຂະຫຍາຍບ້ານເປົ້າໝາຍອອກເປັນ 12 ບ້ານ 9 ເມືອງໃນແຂວງສະຫວັນນະເຂດ.ເມືອງໄຊພູທອງກໍ່ເປັນເມືອງໜຶ່ງຂອງບັນດາເມືອງທີ່ໄດ້ຮັບການຄັດເລືອກໃໝ່ຈາກໂຄງການເຊິ່ງໄດ້ເລີ່ມກິດຈະກໍາແຕ່ເດືອນທັນວາ ປີ 2019.

## ກປມ ໄຊພູທອງ

ບ້ານເປົ້າໝາຍໂຄງການ : ກຸດຕະປໍ




ເມືອງໄຊພູທອງເປັນເມືອງໜຶ່ງທີ່ນອນໃນເຂດທົ່ງພຽງ ແລະ ໃຫ້ຄວາມສໍາຄັນໃນການເຮັດນາແຊງທີ່ມີເປົ້າໝາຍຍົກສະມັດຕະພາບບໍ່ໃຫ້ຫຼຸດ 4.7ຕ/ຮຕ. ບ່ອນທີ່ມີເງື່ອນໄຂໃນການຜະລິດລະດູແລ້ງ (ທັງໝົດ 17 ແຫ່ງ) ມີເນື້ອທີ່ 548.39ຮຕ, ເຂດເປົ້າໝາຍຂອງໂຄງການແມ່ນກຸດຕະປໍ້ພຽງໂຄງການດຽວກໍ່ກວມເນື້ອເຖິງ 109ຮຕ.

ໃນໂຄງການກຸດະປໍ້ນັບຕັ້ງແຕ່ໂຄງການເຂົ້າມາຜົນຜະລິດເຂົ້າກໍ່ເພີ່ມຂຶ້ນ ແລະ ໃນທີ່ສຸດກໍ່ບັນລຸເປົ້າໝາຍ 4.7ຕ/ຮຕ. ນອກຈາກນີ້, ເບິ່ງຈາກຈໍານວນການສະເໜີຂໍເຮືອນຮົ່ມທີ່ເພີ່ມຂຶ້ນ ພວກເຮົາສາມາດເວົ້າໄດ້ວ່າຊາວນາມີຄວາມກະຕືລືລົ້ນໃນການຫັນມາປູກພືດຜັກໃນລະດູຝົນ.



ທ່ານໄຊຍະແສງ
ຮອງຫົວໜ້າຫ້ອງການ
ກປມ ໄຊພູທອງ

### ດ້ານເຕັກນິກກະສິກໍາ (ການປູກເຂົ້າ)

- ນະໂຍບາຍກູ້ຢືມໄດ້ຈັດແລ້ວ 3 ຄັ້ງມີຜູ້ເຂົ້າຮ່ວມທັງໝົດ 64 ຄົວເຮືອນ (57% ຂອງຊາວນາທັງໝົດໃນກຸ່ມເປົ້າໝາຍ).
- ຈໍານວນເງິນກູ້ຢືມແມ່ນຖືກເກັບຢ່າງສະດວກສະບາຍ.
- ສະມັດຕະພາບເຂົ້າໃນບ້ານເປົ້າໝາຍໄດ້ເພີ່ມຂຶ້ນ27%*

*ຜົນຂອງການສໍາລວດສະມັດຕະພາບນາແຊງ: 2020-2021

### ພາບລວມ

ເຖິງວ່າຍັງບໍ່ຮອດ 2 ປີ ທີ່ໂຄງການສະຫວັນເພດເຮົາໄດ້ຮ່ວມມືກັນກັບເມືອງໄຊພູທອງ, ຊາວນາໃນບ້ານເປົ້າໝາຍແມ່ນມີຄວາມສາມັກຄີກັນ ແລະ ຫ້າວຫັນເຂົ້າຮ່ວມການຝຶກມ. ເມືອງໄຊພູທອງແມ່ນຢູ່ບໍ່ໄກຈາກຕົວເມືອງໃຫຍ່ແລະ ກໍ່ມີແຂກຈໍານວນຫຼາຍມາທ່ຽວຊົມພະທາດທີ່ມີຊື່ສຽງ,"ທາດໂພ່ນ".



### ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນໍາໃຊ້ນໍ້າ

- ກຸ່ມນໍາໃຊ້ນໍ້າພະຍາຍາມແກ້ໄຂບັນຫາ ແລະ ປັບປຸງການຄຸ້ມຄອງຈັດການນໍ້າ ໂດຍຜ່ານການຈັດກອງປະຊຸມຂອງກຸ່ມ ທີ່ໄດ້ຈັດຂຶ້ນເດືອນລະຄັ້ງ.
- ການຂະຫຍາຍເນື້ອທີ່ຊົນລະປະທານໃນບ້ານເປົ້າໝາຍການກໍ່ສ້າງຄອງເໝືອງແມ່ ແມ່ນໄດ້ຮັບການສະໜັບສະໜູນໂດຍລັດຖະບານ: 40 ຮຕ → 109ຮຕ*

  *ການສົມທຽບນາແຊງລະຫວ່າງປີ 2018-19 & 2020-21
- ພະນັກງານຂອງ ກປມ ມີຄວາມສົນໃຈໃນການຮັບເອົາເຕັກນິກຕ່າງໆເຊັ່ນການວັດແທກເນື້ອທີ່ດິນພ້ອມທັງຍັງຕັ້ງໃຈຮຽນອີກດ້ວຍ.

### ດ້ານການຕະຫຼາດ / ການປູກພືດສວນ

- ຊາວນາໃນບ້ານເປົ້າໝາຍທີ່ມີຄວາມຕັ້ງໃຈໄດ້ລວມໂຕກັນ ແລະ ໄດ້ເລີ່ມຂາຍຜັກໃນຕະຫຼາດຜັກຕັ້ງແຕ່ເດືອນ ກັນຍາ ປີ 2020.
- ໃນປະຈຸບັນນີ້, ໂຄງການສະຫວັນເພດກໍາລັງສອນວິທີການເຮັດຝຸ່ນໂບກາຊິຢູ່ໃນແຕ່ລະບ້ານເປົ້າໝາຍກໍ່ຄືກັນແກ້ໄຂບັນຫາຂອງຊາວສວນກ່ຽວກັບການປູກພືດຜັກຕາມແຕ່ລະໄລຍະ.

## ຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ (PAPC)

ປະຈຸບັນໂຄງການສະຫວັນເພດ ກຳລັງສ້າງຄວາມເຂັ້ມແຂງໃຫ້ລະບົບການເຮັດວຽກສຳລັບການສົ່ງເສີມກິດຈະກຳຂອງຊາວນາຜ່ານການຮ່ວມມືກັນກັບທຸກພະແນກການ ແລະ ຂະແໜງການຂອງແຂວງສະຫວັນນະເຂດ ທີ່ບໍ່ແມ່ນສະເພາະວຽກງານສົ່ງເສີມເຕັກນິກການປູກ, ແຕ່ຍັງມີວຽກງານສົ່ງເສີມການຂາຍ, ແຜນການຜະລິດ, ການຄ້ຳປະກັນງົບປະມານ ແລະ ອື່ນໆ.

ຄາດຫວັງວ່າໃນອະນາຄົດໜຶ່ງນີ້, ຈະນຳເອົາພາກສ່ວນເອກະຊົນ ແລະ ສະຖາບັນການເງິນຕ່າງໆເຂົ້າມາເປັນສ່ວນໜຶ່ງໃນການສົ່ງເສີມ.

ສະນັ້ນ, "ຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນກັນຍາ 2020 ທີ່ປຽບເໝືອນຮູບແບບຂອງການເຮັດວຽກແບບຮ່ວມມືກັນ ເພື່ອການສົ່ງເສີມຊາວນາ.

ການຮ່ວມມືໃນທົ່ວຂະແໜງການ

ກປ.ສຂ
ກະສິກຳ ແລະ ປ່າໄມ້

ຜທ.ສຂ
ແຜນການ ແລະ ການລົງທຶນ

ອຄ.ສຂ
ອຸດສາຫະກຳ ແລະ ການຄ້າ

ກງ.ສຂ
ການເງິນ

ພາກເອກະຊົນ

ສະຖາບັນການເງິນ

ຄະນະສົ່ງເສີມກະສິກຳແບບມີສ່ວນຮ່ວມ (PAPC)

## ພາລະບົດບາດ ແລະ ການດຳເນີນງານຄະນະ PAPC

ເປັນຄະນະໜຶ່ງທີ່ສຸມໃສ່ການສ້າງຄວາມຍືນຍົງໃຫ້ຮູບແບບຂອງໂຄງການສະຫວັນເພດກໍ່ຄືຮູບແບບ "ການພັດທະນາກະສິກຳແບບມີສ່ວນຮ່ວມ"* ເຖິງວ່າຫຼັງຈາກທີ່ໂຄງການສິ້ນສຸດແລ້ວກໍ່ຕາມ ພ້ອມທັງຜັນຂະຫຍາຍຮູບແບບດັ່ງກ່າວໄປຍັງເຂດອື່ນໆ ປຽບເໝືອນດັ່ງກິດຈະກຳຂອງແຂວງເອງ. ສຳລັບແຜນດຳເນີນງານຕົວຈິງພາຍໃນຄະນະ ພີເອພີຊີ, "ຄະນະຄຸ້ມຄອງຈັດການ" ຮັບຜິດຊອບຊີ້ນຳລວມ ແລະ ຍື່ນສະເໜີຂໍງົບປະມານ, "ກຸ່ມວຽກ" ຮັບຜິດຊອບການສົ່ງເສີມ ແລະ ຊີ້ນຳດ້ານເຕັກນິກສຳລັບວຽກງານພາກສະໜາມ ແລ້ວສົ່ງບົດລາຍງານ ແລະ ແຜນງົບປະມາໃຫ້ຂັ້ນສູງກ່ວາພາຍໃນຄະນະ, ສ່ວນ"ທີມຈັດຕັ້ງປະຕິບັດ" ແມ່ນປະຕິບັດການສົ່ງເສີມຊາວນາໃນພື້ນທີ່ໂດຍກົງ. ນີ້ແມ່ນການຜັນຂະຫຍາຍຮູບແບບ ພີເອດີ ດ້ວຍ 3 ຂັ້ນຂອງການຈັດຕັ້ງເພື່ອການສົ່ງເສີມຊາວນາແບບທາງກົງ / ທາງອ້ອມ.

ກອງເລຂາ
- ປະສານງານໂດຍລວມ
- ການຄຸ້ມຄອງກອງທຶນໝູນວຽນ



ຄະນະຄຸ້ມຄອງຈັດການ
- ແຜນໂດຍລວມ
- ການຂໍງົບປະມານ

ການລາຍງານ





ກຸ່ມວຽກ
- ການວາງແຜນກິດຈະກຳ
- ການຕິດຕາມ

ການຕິດຕາມ



ທີມຈັດຕັ້ງປະຕິບັດ
- ທີມວາງແຜນ: ແຜນການຈັດຕັ້ງປະຕິບັດ ແລະ ການວາງແຜນຂັ້ນເມືອງ, ການຄາດຄະເນງົບປະມານ
- ທີມຊົນລະປະທານ
- ທີມປູກຝັງ
- ທີມກະສິກຳການຄ້າ
- ທີມການຕະຫຼາດ

(ທີມຊົນລະປະທານ, ທີມປູກຝັງ, ທີມກະສິກຳການຄ້າ, ທີມການຕະຫຼາດ:) ການແນະນຳຢູ່ພາກສະໜາມ

### * PAD ແມ່ນຫຍັງ?

ເປັນການນຳສະເໜີຮູບແແບບການພັດທະນາກະສິກຳທີ່ມີເປົ້າໝາຍເພື່ອເພີ່ມຜົນຜະລິດ ແລະ ລາຍຮັບຂອງຊາວກະສິກອນໂດຍການຮ່ວມມືຂອງຊາວກະສິກອນ ແລະ ລັດຖະບານ. ພີເອດີ ປະກອບດ້ວຍ 3 ຫຼັກການ 1) ຊາວກະສິກອນມີສ່ວນຮ່ວມໃນການຕັດສິນໃຈ 2) ລັດຖະບານຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການສະໜັບສະໜູນທາງດ້ານງົບປະມານໃນການເຄື່ອນໄຫວກິດຈະກຳຂອງຊາວກະສິກອນ ແລະ 3) ພາກເອກະຊົນ ແລະ ສະຖາບັນການເງິນເຂົ້າຮ່ວມເພື່ອສະໜັບສະໜູນກິດຈະກຳ. ສຳລັບການຈັດຕັ້ງປະຕິບັດຕົວຈິງແມ່ນໄດ້ສຸມໃສ່ 3 ຈຸດຄື: ຊົນລະປະທານ,ການປູກເຂົ້າ, ການຕະຫຼາດ/ການປູກຜັກ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)